**ຂໍ້ແນະນຳໃນການຂໍວີຊາການຄ້າໃຕ້ຫວັນ**

1. ໜັງສືຜ່ານແດນຕົ້ນສະບັບ ແລະ ສະບັບອັດສຳເນົາ: ຫນັງສືຜ່ານແດນຕ້ອງຍັງມີອາຍຸນຳໃຊ້ແຕ່ 6 ເດືອນຂຶ້ນໄປ, ໃຫ້ອັດສຳເນົາໜ້າໜັງສືຜ່ານແດນ, ວີຊາທັງໝົດ ແລະ ບັນດາກາຈ້ຳເຂົ້າອອກເມືອງ (ຖ້າມີ).
2. ຕື່ມຂໍ້ມູນເຂົ້າໃນໃບແຈ້ງອອນໄລຂໍວີຊາຢູ່ໜ້າເວັບຊາຍ: https://visawebapp.boca.gov.tw (General Visa), ຫຼັງຈາກນັ້ນໃຫ້ປິ້ນອອກ, ຕິດຮູບ (ຮູບ 2 ໃບຂະໜາດ 4x6 ພື້ນຮູບສີຂາວໄດ້ຖ່າຍພາຍໃນເວລາ 6 ເດືອນ), ຜູ້ກ່ຽວຕ້ອງເຊັນໃສ່ເບື້ອງຫຼັງຂອງໃບແຈ້ງ.
3. ຈົດໝາຍເຊື້ອເຊີນຂອງບໍລິສັດຝ່າຍໃຕ້ຫວັນ (ຈົດໝາຍເຊີນຕ້ອງມີຄົບຂໍ້ມູນຂອງບໍລິສັດເຊີນເຊັ່ນ: ຊື່, ທີ່ຢູ່, ເບີໂທ, ເບີແຟັກ... ແລະ ຜູ້ເຊີນຕ້ອງເຊັນໃສ່ ແລະ ປະທັບກາຂອງບໍລິສັດ).
4. ໜັງສືຜ່ານແດນ, ບັດປະຈຳຕົວ ຫຼື ບັດຢູ່ອາໄສໃຕ້ຫວັນຂອງຜູ້ເຊີນສະບັບອັດສຳເນົາ.
5. ໃບອະນຸຍາດດຳເນີນທຸລະກິດຂອງບໍລິສັດໃຕ້ຫວັນສະບັບອັດສຳເນົາ.
6. ໃບຢືນຢັນອາຊີບເປັນພາສາຈີນ ຫຼື ພາສາອັງກິດທີ່ມີລາຍເຊັນຂອງຜູ້ຮັບຜິດຊອບບໍລິສັດ ແລະ ໄດ້ປະທັບກາຂອງບໍລິສັດ.
7. ຖ້າຜູ້ຂໍວີຊາເປັນຜູ້ຮັບຜິດຊອບບໍລິສັດ ແມ່ນບໍ່ຕ້ອງການໜັງສືນີ້.
8. ຂໍ້ຕົກລົງແຕ່ງຕັ້ງພະນັກງານໄປໃຕ້ຫວັນເຮັດວຽກຂອງບໍລິສັດລາວເປັນພາສາຈີນ ຫຼື ພາສາອັງກິດຕົ້ນສະບັບ, ມີປະທັບກາ ແລະ ລາຍເຊັນຂອງຜູ້ຮັບຜິດຊອບບໍລິສັດ.
9. ໃບອະນຸຍາດດຳເນີນທຸລະກິດຂອງບໍລິສັດລາວຕົ້ນສະບັບ ແລະ ສະບັບອັດສຳເນົາ (ຖ້າເປັນພາສາລາວແມ່ນຕ້ອງແປມາເປັນພາສາຈີນ ຫຼື ພາສາອັງກິດ, ມີກາຈ້ຳ ແລະ ລາຍເຊັນຂອງຜູ້ຮັບຜິດຊອບບໍລິສັດ).
10. ຖ້າວ່າມອບສິດໃຫ້ຜູ້ອື່ນເຮັດໃຫ້, ຕ້ອງມີໜັງສືແນະນຳຂອງບໍລິສັດ, ຜູ້ໄດ້ມອບສິດຕ້ອງສະໜອງບັດປະຈຳຕົວຕົ້ນສະບັບ ແລະ ສະບັບອັດສຳເນົາ.
11. ອີງໃສ່ການກຳນົດຢູ່ຂໍ້ 5 ຂອງແຈ້ງການແນະນຳການປະຕິບັດກົດໝາຍວ່າດ້ວຍການເຮັດໜັງສືຜ່ານແດນ, ວີຊາຕໍ່ກັບຄົນຕ່າງປະເທດ, ຫ້ອງການເສດຖະກິດ ແລະ ວັດທະນະທຳໃຕ້ຫວັນປະຈຳຫວຽດນາມອາດຈະຮຽກຮ້ອງຜູ້ກ່ຽວທີ່ຂໍວີຊາຕ້ອງມາສຳພາດ ຫຼື ສະໜອງຕື່ມເອກະສານທີ່ກ່ຽວຂ້ອງຕ່າງໆ.
12. ຄ່າທຳນຽມ:

    ເຮັດດ່ວນແມ່ນ 75 ໂດລາສະຫະລັດ (ພາຍຫຼັງ 2 ວັນລັດຖະການ, ບໍ່ນັບມື້ມາສົ່ງເອກະສານ)

    ເຮັດທຳມະດາແມ່ນ 50 ໂດລາສະຫະລັດ (ພາຍຫຼັງ 5 ວັນລັດຖະການ, ບໍ່ນັບມື້ມາສົ່ງເອກະສານ)

Update ວັນທີ 14/12/2017